*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 234-243*
*https://doi.org/10.69692/SUJMRD1202234*

# Factors Affecting the Intention to International Course in Business Administration Programs, Savannakhet University

**Khamkeo MANIVONG[1], Thongsa TOUNMANYSONE[2], Bounphan VONGKHASEUM[3]**
*Faculty of Business Administration, Savannakhet University, Lao PDR*

***Correspondence:***
[3]Bounphan VONGKHASEUM, Faculty of Business Administration, Savannakhet University, Tel: +85620 5520 9200, E-mail: v.bounphan@sku.edu.la

***Article Info:***
***Submitted: April 8, 2026***
***Revised: May 20, 2026***
***Accepted: May 20, 2026***

**Abstract**

This research aims to: 1) determine the level of intention to the International Course in Business Administration program at the Faculty of Business Administration, Savannakhet University; and 2) identify factors affecting this intent at the Faculty of Business Administration, Savannakhet University. The researcher used cross-sectional data collected from a sample of 1,126 people. in Kaysone Phomvihane City, Uthoumphone District, Atsaphangthong and Songkhon. Statistical analyses included the mean, standard deviation, and a two-option economic logit model. The findings indicate that demand for the international business administration program is high, with a mean score of 3.76 (S.D. = 0.59). Factors influencing the desire for admission include the father's and mother's occupations, career expectations after graduation, social status, and the institution's image.

**Keywords:** *Intention, International Course in Business Programs, Factors Affecting*

## 1. ພາກສະເໜີ

ການສຶກສາເປັນພື້ນຖານສຳຄັນທີ່ສຸດໃນການພັດທະນາສັງຄົມເພື່ອເຮັດໃຫ້ຄົນໃນສັງຄົມເປັນຄົນທີ່ມີຄຸນນະພາບ ແລະ ຄຸນນະທຳເຊິ່ງການສຶກສາຈະຊ່ວຍສ້າງຈິດສຳນຶກຂອງການເປັນມະນຸດ, ມີຈິດວິນຍານຂອງຜູ້ທີ່ມີອາລະຍະທຳທາງປັນຍາ ແລະ ຄວາມງົດງາມທາງດ້ານຈິດໃຈ. ການສຶກສາສ້າງຄົນໃຫ້ມີຄວາມຮູ້ໃນການດຳລົງຊີວິດ, ການປະກອບອາຊີບ, ມີຄວາມອົດທົນໃນການຕໍ່ສູ້ກັບອຸປະສັກຂອງຊີວິດ (Phommalangsy et al., 2024). ການພົວພັນການຄ້າລະຫວ່າງປະເທດ (Cross-Border) ແມ່ນມີຄວາມສຳຄັນໃນຍຸກທີ່ທຸລະກິດບໍ່ມີພົມແດນ (Border-less Business Globalization) ສົ່ງຜົນໂດຍກົງຕໍ່ຄວາມຕ້ອງການແຮງງານທີ່ມີທັກສະໃນການເຮັດວຽກພ້ອມກັບການປັບຕົວໃຫ້ເຂົ້າກັບຍຸກທຸລະກິດບໍ່ມີພົມແດນ (Border-less Business) ແລະ ມີຄວາມເປັນສາກົນ ສະນັ້ນ, ພາກທຸລະກິດເລີ່ມມີຄວາມຕ້ອງການບຸກຄະລາກອນທີ່ມີຄວາມສາມາດທາງດ້ານວິຊາຊີບ ແລະ ພາສາອັງກິດຫຼາຍຂຶ້ນ ສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນໄດ້ມີການປັບຕົວເພື່ອຮອງຮັບການຂະຫຍາຍຕົວໃຫ້ເຂົ້າກັບຍຸກ ຄວາມໄຮ້ພົມແດນເຊັ່ນກັນ (Uthayapong et al., 2022), ການພັດທະນາສະຖາບັນການສຶກສາຊັ້ນສູງໃຫ້ເຂົ້າສູ່ຄວາມເປັນສາກົນ ເປັນອີກທິດທາງໜຶ່ງທີ່ສຳຄັນຕໍ່ການເປັນສະຖາບັນການສຶກສາຊັ້ນນຳເຊິ່ງແຕ່ລະມະຫາວິທະຍາໄລພາຍໃນ ສປປ ລາວ ພະຍາຍາມສົ່ງເສີມການສຶກສາດວ້ຍການຈັດການຮຽນ-ການສອນຫຼັກສູດນາໆຊາດໃຫ້ຫຼາຍຂຶ້ນເພາະວ່າຕະຫຼາດແຮງງານຕ້ອງການບຸກຄະລາກອນທີ່ມີຄວາມສາມາດດ້ານພາສາຕ່າງປະເທດເພີ່ມຂຶ້ນ ແຕ່ໃນທາງກັບກັນຫຼັກສູດນາໆຊາດທີ່ເປີດການຮຽນ-

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 234-243*
*https://doi.org/10.69692/SUJMRD1202234*

ການສອນໃນສະຖາບັນການສຶກສາຊັ້ນມີພຽງແຕ່ 8 ຫຼັກສູດໃນສົກສຶກສາ 2024-2025 ເຖິງຢ່າງກໍ່ຕາມສະຖາບັນການສຶກສາຊັ້ນສູງກໍ່ໄດ້ຜັນດັນໃຫ້ມີການສ້າງຫຼັກສູດນາໆຊາດໃຫ້ເພີ່ມຂຶ້ນໃນອະນາຄົດໂດຍຄາດຄະເນໃຫ້ໄດ້ 10 ຫຼັກສູດໃນສົກສຶກສາ 2025-2026 ແລະ 20 ຫຼັກສູດໃນສົກສຶກສາ 2029-2030 (Ministry of Education and Sport, 2025). ມະຫາວິທະຍາໄລສະຫວັນນະເຂດເປັນມະຫາວິທະຍາໄລແຫ່ງທີ 4 ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ໄດ້ຮັບການສ້າງຕັ້ງຂຶ້ນຕາມດຳລັດນາຍົກລັດຖະມົນຕີລັດຖະມົນຕີແຫ່ງ ສປປ ລາວ ເລກທີ 091/ນຍ, ລົງວັນທີ 27 ມີນາ 2009 ເປັນສູນກາງຂອງການສຶກສາ ແລະ ວັດທະນາທຳໃນເຂດພາກກາງແນໃສ່ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ການຄົ້ນຄວ້າເພື່ອຕອບສະໜອງແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ (Suikhamlar et al., 2022). ໂດຍໄດ້ສ້າງຫຼັກສູດທີ່ຫຼາກຫຼາຍເພື່ອຕອບສະໜອງຄວາມຕ້ອງການຕະຫຼາດແຮງງານໂດຍສະເພາະໄດ້ສ້າງຫຼັກສູດນາໆຊາດສາຂາພັດທະນາຊົນນະບົດເພື່ອຮອງຮັບຄວາມຕ້ອງການນັກສຶກສາ ແລະ ມີແຜນສ້າງຫຼັກສູດນາໆຊາດເພີ່ມຂຶ້ນອີກຫຼາຍສາຂາໃນນັ້ນຄະນະບໍລິຫານທຸລະກິດກໍ່ເປັນຄະນະວິຊາໜຶ່ງທີ່ນອນຢູ່ໃນ ມະຫາວິທະຍາໄລສະຫວັນນະເຂດ ຊຶ່ງໄດ້ສ້າງບຸກຄະລາກອນອອກມາຮັບໃຊ້ສັງຄົມໃນລະດັບປະລິນຍາຕີຈົບການສຶກສາແລ້ວຈຳນວນ 13 ຮຸ່ນຄົນ (ນັບແຕ່ປີ 2013 ເປັນຕົ້ນມາ) ເຊິ່ງມີແຜນໃນການສ້າງຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ທັງນີ້ກໍ່ເພື່ອຮອງຮັບແນວໂນ້ມການປ່ຽນແປງສະພາບແວດລ້ອມທາງທຸລະກິດຢ່າງຕໍ່ເນື່ອງພ້ອມທັງຄວາມຕ້ອງການບຸກຄະລາກອນດ້ານບໍລິຫານທຸລະກິດຂອງຜູ້ປະກອບການທີ່ເພີ່ມຂຶ້ນເຊິ່ງຫຼັກສູດນາໆຊາດສາຂາບໍລິຫານທຸລະກິດກໍ່ໄດ້ມີການເປີດການຮຽນ-ການສອນທີ່ເປັນທາງເລືອກໃຫ້ນັກຮຽນທັງພາຍໃນ ແລະ ຕ່າງປະເທດທີ່ຈະໄປສຶກສາສະຖາບັນດັ່ງກ່າວເຖິງຢ່າງໃດກໍ່ຕາມຖ້ານັກຮຽນເລືອກຮຽນເຂົ້າຮຽນຕໍ່ຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ການຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຊ່ວຍພັດທະນາຄວາມຮູ້, ທັກສະ ແລະ ເພີ່ມໂອກາດໃນການເຮັດວຽກໃນຍຸກໂລກາພິວັດໄດ້ຫຼາຍຂຶ້ນກວ່າເກົ່າ. ຈາກເຫດຜົນຂ້າງເທິງນີ້ຈຶ່ງກຳນົດຈຸດປະສົງເພື່ອສຶກສາ: 1) ລະດັບຄວາມຕ້ອງການໃນການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ແລະ 2) ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ເພື່ອນຳຜົນຈາກການວິໄຈໃນຄັ້ງນີ້ນຳໃຊ້ເຂົ້າໃນການຮຽນ-ການສອນ ແລະ ເປັນການເກັບກຳຂໍ້ມູນໄປໃຊ້ແກ້ໄຂບັນຫາການຫຼຸດລົງຂອງນັກສຶກສາ ແລະ ຍັງເປັນຂໍ້ມູນເບື້ອງຕົ້ນໃນການເປີດສາຂາທີ່ນັກຮຽນສົນໃຈໃນອະນາຄົດ.

## 2. ອຸປະກອນ ແລະ ວິທີການ

2.1 ຮູບແບບການສຶກສາ

ການສຶກສາຄັ້ງນີ້ແມ່ນແບບປະລິມານໂດຍການຊອກຫາລະດັບຄວາມຕ້ອງການໃນການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ແລະ ການນຳໃຊ້ແບບຈຳລອງທາງເສດຖາມິຕິເຂົ້າຊ່ວຍເພື່ອຊອກຫາປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ

2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນຈຳນວນນັກຮຽນຊັ້ນມັດທະຍົມຕອນປາຍ (ຊັ້ນ ມ 7) ພາຍໃນແຂວງສະຫວັນນະເຂດ (ນະຄອນໄກສອນພົມວິຫານ, ເມືອງອຸທຸມພອນ, ອາດສະພັງທອງ ແລະ ສອງຄອນ ປະຈຳສົກ 2024 – 2025) ຈຳນວນ 1,269 ຄົນ ໂດຍນຳໃຊ້ສູດກຳນົດກຸ່ມຕົວຢ່າງໃນກໍລະນີຮູ້ຈຳນວນປະຊາກອນທີ່ແນ່ນອນຂອງທ່ານ ທາໂຣ ຢາມາເນ, (Yamane, 1973). ເຊິ່ງລະດັບຄວາມເຊື່ອໝັ້ນ 99% ໂດຍຍອມໃຫ້ຄວາມຄາດເຄື່ອນ 0.01 ສະນັ້ນ, ກຸ່ມຕົວຢ່າງທີ່ນຳໃຊ້ເຂົ້າໃນການສຶກສາໃນຄັ້ງນີ້ມີທັງໝົດແມ່ນ 1,126 ຄົນ ລາຍລະອຽດສະແດງອອກດັ່ງຕາຕະລາງທີ 1.

2.3 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ການສຶກສາໃນຄັ້ງນີ້ແມ່ນໄດ້ນໍາແບບສອບຖາມເພື່ອເປັນເຄື່ອງມືເຂົ້າໃນການເກັບກໍາຂໍ້ມູນ ແຕ່ກ່ອນຈະມີການເກັບກໍາຂໍ້ມູນຢ່າງເປັນທາງການນັ້ນ ກໍ່ໄດ້ນໍາແບບສອບຖາມໄປຜ່ານຜູ້ຊ່ຽວຊານຈໍານວນ 5 ທ່ານເພື່ອກວດຄວາມສອດຄ່ອງຂອງແຕ່ລະຄໍາຖາມກັບຈຸດປະສົງຂອງບົດຄົ້ນຄວ້າ ໂດຍເຫັນວ່າຄ່າ IOC ຕັ້ງແຕ່ 0.50 ຂຶ້ນໄປຖືວ່າເໝາະສົມສາມາດນໍາໄປໃຊ້ໄດ້ໂດຍຜົນການທົດສອບ IOC = 0.89 ແລະ ຄ່າຄວາມເຊື່ອໝັ້ນ (Reliability) ດ້ວຍຄ່າສໍາປະສິດຂອງ Cronbach's Alpha (Cronbach, 1951) ເຊິ່ງມີເກນ ຂຶ້ນໄປສະແດງວ່າແບບສອບຖາມມີຄວາມໜ້າເຊື່ອຖື ໂດຍຜົນຂອງການທົດສອບພົບໄດ້ວ່າຄ່າຄວາມເຊື່ອໝັ້ນເທົ່າກັບ 0.95 ສູງກວ່າເກນທີ່ໄດ້ກໍານົດໄວ້ ເຊິ່ງແບບສອບຖາມປະກອບມີ 3 ພາກສ່ວນຄື: 1) ຂໍ້ມູນທົ່ວໄປ, 2) ລະດັບຄວາມຕ້ອງການໃນການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ແລະ 3) ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ແລະ 4) ຄວາມຄິດເຫັນເພີ່ມເຕີມ

2.4 ການເກັບກໍາຂໍ້ມູນ

ການສຶກສາຄັ້ງນີ້ແມ່ນໄດ້ນໍາໃຊ້ແບບສອບຖາມແຈກຢາຍໃຫ້ກັບນັກຮຽນຊັ້ນມັດທະຍົມສຶກສາຕອນປາຍຊັ້ນມ 7 ພາຍໃນແຂວງສະຫວັນນະເຂດ ຂັ້ນຕອນທີ 1 ທີມງານວິໄຈໄດ້ຂໍໜັງສືສະເໜີຈາກມະຫາວິທະຍາໄລສະຫວັນນະເຂດໄປຍື່ນໃຫ້ກັບທ່ານຜູ້ອໍານວຍການໂຮງຮຽນແຕ່ລະແຫ່ງເພື່ອຂໍອະນຸຍາດລົງເກັບກໍາຂໍ້ມູນກັບນັກຮຽນ ແລະ ຂັ້ນຕອນທີ 2 ທີມງານວິໄຈໄດ້ລົງແຈກຢາຍແບບຟອມສອບຖາມນໍານັກຮຽນໂດຍຂໍໃຫ້ທ່ານຜູ້ອໍານວຍການໂຮງຮຽນນໍາພາໃນຊ່ວງເລີ່ມຕົ້ນຫຼັງຈາກນັ້ນແມ່ນທີມງານວິໄຈເປັນຜູ້ເກັບເອງ ໂດຍຈະໃຊ້ເວລາສອບຖາມກັບນ້ອງນັກຮຽນແບບເຊິ່ງໜ້າ (Face to Face) ຄົນລະປະມານ 10 ນາທີ ເພື່ອຊອກຫາລະດັບຄວາມຕ້ອງການໃນການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ແລະ ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ຊຶ່ງໄລຍະເວລາໃນການເກັບແມ່ນເລີ່ມຈາກເດືອນມັງກອນ 2025 – ເມສາ 2025

2.5 ການວິເຄາະຂໍ້ມູນ

ສໍາລັບການວິເຄາະຂໍ້ມູນເພື່ອຊອກຫາປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ ແມ່ນນໍາໃຊ້ສົມຜົນແບບຖົດຖອຍ Logistic Regression Analysis ໂດຍນໍາໃຊ້ໂປຣແກຣມສໍາເລັດຮູບ ເຂົ້າໃນການວິເຄາະເພື່ອຊອກຫາຄ່າສໍາປະສິດທີ່ສະແດງຄວາມສໍາພັນລະຫວ່າງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະທີ່ກ່ຽວຂ້ອງ.

ຕໍາລາການພົວພັນແມ່ນ: Desire = *f*(Gen, Age, Member, Fa, Mo, CG, SS, II, IR)

ສົມຜົນແມ່ນ: $Want_i = \beta_0 + \beta_1 Gen + \beta_2 Age + \beta_3 Member + \beta_4 Fa + \beta_5 Mo + \beta_6 CG + \beta_7 SS + \beta_8 II + \beta_9 IR + \varepsilon_i$

Want = ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດ ສາຂາບໍລິຫານທຸລະກິດ (ຕົວປ່ຽນຕາມ)

$\beta_0$ : ຄ່າຄົງຄ່າ, $\beta_1 - \beta_9$ : ສໍາປະສິດຂອງຕົວປ່ຽນອິດສະຫຼະ

$X_{ij}$ : ຕົວປ່ຽນອິດສະຫຼະ

$\varepsilon_t$ : ຄ່າຄາດເຄື່ອນ

ເຊິ່ງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະທີ່ນໍາໃຊ້ເຂົ້າໃນແບບຈໍາລອງນີ້ແມ່ນສະແດງອອກດັ່ງລາຍລະອຽດດັ່ງຕາຕະລາງທີ 2.

## 3. ຜົນໄດ້ຮັບ

3.1 ຜົນການວິເຄາະລະດັບຄວາມຕ້ອງການໃນການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ

ຜົນການສຶກສາພົບວ່າ ຄວາມຄາດຫວັງດ້ານອາຊີບຫຼັງຈາກຮຽນຈົບ ເຫັນວ່າຢູ່ໃນລະດັບຫຼາຍ ມີ ($\bar{X}$ = 3.81, SD = 0.57) ເນື່ອງຈາກວ່ານັກຮຽນມີຄວາມຄາດຫວັງວ່າຫຼັງຈາກຮຽນຈົບຫຼັກສູດນາໆຊາດສາຂາບໍລິຫານທຸລະກິດແລ້ວຈະສາມາດຊອກວຽກເຮັດກັບພາກລັດ, ເອກະຊົນ ຫຼື ອົງການຈັດຕັ້ງຕ່າງໆໄດ້ ເພື່ອສ້າງລາຍໄດ້ໃຫ້ຕົນເອງ ຫຼື ຄອບຄົວ ນອກຈາກນີ້ແມ່ນການໄດ້ໃຊ້ຄວາມຮູ້ທີ່ຮຽນມາພັດທະນາສັກກະຍະພາບໃນວິຊາຊີບ ພ້ອມທັງໂອກາດ

*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 234-243*
*https://doi.org/10.69692/SUJMRD1202234*

ຈະເລີນເຕີບໂຕໃນໜ້າທີ່ການງານ ແລະ ການສ້າງທຸລະກິດສ່ວນໂຕຕາມທີ່ໄດ້ຮຽນມາ, ຮອງລົງມາແມ່ນດ້ານຊື່ສຽງຂອງສະຖາບັນ ເຫັນວ່າຢູ່ໃນລະດັບຫຼາຍ ມີ ($\bar{X}$ = 3.77, SD = 0.64) ນັກຮຽນຊັ້ນມັດທະຍົມຕອນປາຍເຫັນວ່າຊື່ສຽງຂອງມະຫາວິທະຍາໄລສະຫວັນນະເຂດເວົ້າລວມ ເວົ້າສະເພາະຄະນະບໍລິຫານທຸລະກິດ ແມ່ນສະຖາບັນທີ່ຜະລິດບຸກຄະລາກອນທີ່ເຊິ່ງປະກອບສ່ວນສ້າງນັກວິຊາການທີ່ມີຄວາມຮູ້ຄວາມສາມາດດ້ານບໍລິຫານທຸລະກິດໂດຍປະຕິບັດຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາທີ່ກະຊວງສຶກສາທິການ ແລະ ກິລາວາງອອກ, ດ້ານຖານະທາງສັງຄົມເຫັນວ່າຢູ່ໃນລະດັບຫຼາຍ ມີ ($\bar{X}$ = 3.76, SD = 0.54) ເຫັນວ່າພາຍຫຼັງທີ່ນັກສຶກສາຮຽນຈົບຫຼັກສູດນີ້ແມ່ນຈະໄດ້ຖືກຍອມຮັບເຂົ້າເຮັດວຽກຈາກຜູ້ປະກອບການທັງບໍລິສັດພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາທຸລະກິດຂອງເຂົາເຈົ້າ ແລະ ດ້ານພາບພົດຂອງສະຖາບັນ ເຫັນວ່າຢູ່ໃນລະດັບຫຼາຍ ມີ ($\bar{X}$ = 3.72, SD = 0.60) ເນື່ອງຈາກວ່າຫຼັກສູດທີ່ມີຄວາມເໝາະສົມກັບຄວາມຕ້ອງການຂອງຕະຫຼາດແຮງງານເນື່ອງຈາກວ່າແຂວງສະຫວັນນະເຂດແມ່ນແຂວງທີ່ມີແລວເສດຖະກິດຕາເວັນອອກຕາເວັນຕົກ ພ້ອມກັນນັ້ນກໍ່ຍັງມີພະນັກງານຄູ-ອາຈານທີ່ມີປະສົບການໃນການສິດສອນມາຫຼາຍປີ ແລະ ມີສະຖານທີ່ເອື້ອອຳນວຍຄວາມສະດວກສຳລັບການໃຊ້ເຂົ້າໃນການຮຽນ-ການສອນນັກສຶກສາ ລາຍລະອຽດດັ່ງຕາຕະລາງທີ 3.

3.2 ຜົນການວິເຄາະປັດໃຈທີ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ

ສຳລັບການຄາດປະມານໃນແບບຈຳລອງ (Model) ທີ່ໄດ້ນຳໃຊ້ຂໍ້ມູນໄຂວ່ (Cross Section Data) ການກວດສອບຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະດ້ວຍກັນ ຫຼື ການກວດສອບບັນຫາພະຫຸສຳພັນຂອງບັນດາຕົວປ່ຽນອິດສະຫຼະ (Multicollinearity) ຖ້າຫາກວ່າຕົວປ່ຽນອິດສະຫຼະຫາກມີການພົວພັນກັນສູງກວ່າ 0.60 (ສຳລັບຂໍ້ມູນໄຂວ່) ສະແດງວ່າເກີດມີບັນຫາພະຫຸສຳພັນເຊິ່ງຈາກການທົດສອບໃນແບບຈຳລອງນີ້ດ້ວຍວິທີ Correlation Matrix ເຫັນວ່າຄ່າສູງສຸດແມ່ນ 0.57 ເຊິ່ງເປັນການພົວພັນຂອງຕົວປ່ຽນ ດ້ານອາຊີບຫຼັງຮຽນຈົບ ກັບ ດ້ານຖານະທາງສັງຄົມ ສະແດງວ່າບໍ່ມີບັນຫາດັ່ງກ່າວໃນແບບຈຳລອງນີ້.

ຈາກການທົດສອບຂໍ້ສົມມຸດຖານ ຂອງຄວາມຕ້ອງການເລືອກເຂົ້າຮຽນໂດຍພິຈະລະນາຈາກຄ່າ Pseudo $R^2$ = 0.0341 ໝາຍຄວາມວ່າຕົວປ່ຽນອິດສະຫຼະສາມາດອະທິບາຍຕົວປ່ຽນຕາມໄດ້ 3.41%, ມີຄ່າຄາດປະມານ Chi2 = 46.65 ແລະ Prob > Chi2 = 0.000 ໝາຍຄວາມວ່າແບບຈຳລອງນີ້ມີລະດັບຄວາມເຊື່ອຄວາມໝັ້ນ 99%; ສຳລັບປັດໃຈທີ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ປັດໃຈສຳຄັນແມ່ນມີດ້ານອາຊີບຂອງພໍ່ນັກຮຽນ, ອາຊີບຂອງແມ່ນັກຮຽນ, ຄວາມຄາດຫວັງດ້ານອາຊີບຫຼັງຮຽນຈົບ, ດ້ານຖານະທາງສັງຄົມ ແລະ ພາບພົດຂອງສະຖາບັນ ເພື່ອໃຫ້ເຂົ້າໃຈງ່າຍໃນການອະທິບາຍການພົວພັນດັ່ງກ່າວຜູ້ສຶກສາຈະໄດ້ນຳສະເໜີຜົນກະທົບໜ່ວຍສຸດທ້າຍ (Marginal Effects) ເຊິ່ງລາຍລະອຽດສະແດງອອກດັ່ງຕາຕະລາງທີ 4.

ຖ້າຫາກນັກຮຽນຊັ້ນມັດທະຍົມຕອນປາຍ ມ 7 ເປັນເພດຍິງຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດຕ່ຳກວ່າ 4 ສ່ວນຮ້ອຍທຽບໃສ່ເພດຊາຍແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ.

ຖ້າຫາກນັກຮຽນມັດທະຍົມຕອນປາຍ ມ 7 ມີອາຍຸເພີ່ມຂຶ້ນ 1 ປີ ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 1 ສ່ວນຮ້ອຍ ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ.

ຖ້າຫາກສະມາຊິກພາຍໃນຄອບຄົວຂອງນັກຮຽນມັດທະຍົມຕອນປາຍ ມ 7 ເພີ່ມຂຶ້ນ 1 ຄົນ ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດໜ້ອຍກວ່າ 1 ສ່ວນຮ້ອຍ ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ.

ຖ້າຫາກພໍ່ຂອງນັກຮຽນມັດທະຍົມຕອນປາຍ ມ 7 ມີອາຊີບຄ້າຂາຍຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 8 ສ່ວນຮ້ອຍ ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1%.

*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 234-243*
*https://doi.org/10.69692/SUJMRD1202234*

ຖ້າຫາກແມ່ຂອງນັກຮຽນມັດທະຍົມຕອນປາຍ ມ 7 ມີອາຊີບຄ້າຂາຍຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 12 % ດວ້ຍລະດັບຄວາມສໍາຄັນທາງດ້ານສະຖິຕິ 1%.

ຖ້າຫາກຄ່າສະເລ່ຍຂອງຄວາມຄາດຫວັງຫຼັງຈາກຮຽນຈົບເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດໜ້ອຍລົງ 7 % ດວ້ຍລະດັບຄວາມສໍາຄັນທາງດ້ານສະຖິຕິ 1%.

ຖ້າຫາກຄ່າສະເລ່ຍຂອງດ້ານຖານະທາງສັງຄົມເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 7 % ດວ້ຍລະດັບຄວາມສໍາຄັນທາງດ້ານສະຖິຕິ 1%.

ຖ້າຫາກຄ່າສະເລ່ຍຂອງດ້ານພາບພົດຂອງສະຖາບັນເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດໜ້ອຍລົງ 5 % ດວ້ຍລະດັບຄວາມສໍາຄັນທາງດ້ານສະຖິຕິ 5%.

ຖ້າຫາກຄ່າສະເລ່ຍດ້ານຊື່ສຽງຂອງສະຖາບັນເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 4 % ແຕ່ບໍ່ມີລະດັບຄວາມສໍາຄັນທາງດ້ານສະຖິຕິ

**4. ວິພາກຜົນ**

4.1 ລະດັບຄວາມຕ້ອງການໃນການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ

ຜົນຂອງຜູ້ສຶກສາພົບໄດ້ຄົ້ນພົບວ່າ ລະດັບຄວາມຕ້ອງການໃນການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດເຫັນວ່າຢູ່ໃນລະດັບຫຼາຍ ມີ ($\bar{X}$ = 3.76, SD = 0.59) ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Namoontree (2018); Chanthamanyvong et al. (2024); Pheangkhamsone et al. (2025); Vongkhaseum et al. (2026). ແຕ່ວ່າຜົນການຄົ້ນຄວ້າຂອງ Uthayapong et al. (2022) ເຫັນວ່າຢູ່ໃນລະດັບປານກາງ ສ່ວນວ່າຜົນການຄົ້ນຄວ້າຂອງ Laomalol (2019) ເຫັນວ່າຢູ່ໃນລະດັບຫຼາຍທີ່ສຸດ ພ້ອມກັນນີ້ຍັງແຍກອອກເປັນແຕ່ລະດ້ານດັ່ງລຸ່ມນີ້:

ດ້ານຄວາມຄາດຫວັງດ້ານອາຊີບຫຼັງຈາກຮຽນຈົບເຫັນວ່າຢູ່ໃນລະດັບຫຼາຍ ມີ ( $\bar{X}$ = 3.81, SD = 0.57) ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Namoontree (2018) ແລະ Pheangkhamsone et al. (2025).

ດ້ານຊື່ສຽງຂອງສະຖາບັນ ເຫັນວ່າຢູ່ໃນລະດັບຫຼາຍ ມີ ($\bar{X}$ = 3.77, SD = 0.64) ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Uthayapong et al. (2022); Chanthamanyvong et al. (2024); Pheangkhamsone et al. (2025). ສ່ວນວ່າຜົນການຄົ້ນຄວ້າຂອງ Namoontree (2018). ເຫັນວ່າຢູ່ໃນລະດັບຫຼາຍທີ່ສຸດ.

ດ້ານຖານະທາງສັງຄົມ ເຫັນວ່າຢູ່ໃນລະດັບຫຼາຍ ມີ ( $\bar{X}$ = 3.76, SD = 0.54) ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Pheangkhamsone et al. (2025). ສ່ວນວ່າຜົນການຄົ້ນຄວ້າຂອງ Laomalol (2019) ເຫັນວ່າຢູ່ໃນລະດັບຫຼາຍທີ່ສຸດ.

ດ້ານພາບພົດຂອງສະຖາບັນ ເຫັນວ່າຢູ່ໃນລະດັບຫຼາຍ ມີ ( $\bar{X}$ = 3.72, SD = 0.60). ສ່ວນວ່າຜົນການຄົ້ນຄວ້າຂອງ Laomalol (2019) ເຫັນວ່າຢູ່ໃນລະດັບຫຼາຍທີ່ສຸດ.

4.2 ປັດໄຈທີ່ມີຜົນຕໍ່ຄວາມຕ້ອງການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ

ຜົນຂອງຜູ້ສຶກສາພົບໄດ້ຄົ້ນພົບວ່າ ຈາກການຄາດປະມານແບບຈໍາລອງ (Logistics Analysis Regression) ຊຶ່ງຜົນຂອງການສຶກສາເຫັນວ່າອາຊີບຂອງພໍ່, ອາຊີບຂອງແມ່, ຄວາມຄາດຫວັງດ້ານອາຊີບຫຼັງຈາກຮຽນຈົບ, ດ້ານຖານະທາງສັງຄົມ ແລະ ດ້ານພາບພົດຂອງສະຖາບັນແມ່ນມີຜົນຕໍ່ການເລືອກຮຽນ ຫຼື ຜ່ານການທົດສອບທາງສະຖິຕິເຊິ່ງແມ່ນຈະໄດ້ວິພາກດັ່ງລຸ່ມນີ້:

ຜົນຂອງຜູ້ສຶກສາພົບໄດ້ຄົ້ນພົບວ່າ ຖ້າຫາກນັກຮຽນຊັ້ນມັດທະຍົມຕອນປາຍ ມ 7 ເປັນເພດຍິງຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນໜ້ອຍກວ່າ 4% ຖ້າວ່າ

*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 234-243*
*https://doi.org/10.69692/SUJMRD1202234*

ທຽບໃສ່ກັບເພດຊາຍ ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ ເຊິ່ງສອດຄ່ອງກັບການສຶກສາຂອງ Kingjan et al. (2023) ແລະ Vongkhaseum et al. (2026) ທີ່ບອກວ່າເພດແມ່ນບໍ່ມີຜົນຕໍ່ການເລືອກເຂົ້າຮຽນຫຼັກສູດນາໆຊາດ ເຊິ່ງກົງກັນຂ້າມກັບຜົນການຄົ້ນຄວ້າຂອງ Bamrungsetthapong (2018) ແລະ Khowchernklang et al. (2021) ພົບວ່າ ເພດແມ່ນມີຜົນຕໍ່ການເລືອກເຂົ້າຮຽນດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1% ເຖິງຢ່າງໃດກໍ່ຕາມ, ພັກ ແລະ ລັດຖະບານ ກໍ່ຄື ມະຫາວິທະຍາໄລສະຫວັນນະເຂດ ແມ່ນມີຄວາມພ້ອມໃນການຮັບນັກສຶກສາເຂົ້າຮຽນໂດຍທີ່ບໍ່ໄດ້ຈຳແນກລະຫວ່າງເພດຍິງ ແລະ ຊາຍ ມະຫາວິທະຍາໄລສະຫວັນນະເຂດ ແມ່ນໄດ້ໃຫ້ຄວາມເທົ່າທຽມກັບລະຫວ່າງເພດ.

ຜົນການສຶກສາ ພົບວ່າ ຖ້າຫາກນັກຮຽນມັດທະຍົມຕອນປາຍ ມ 7 ມີອາຍຸເພີ່ມຂຶ້ນ 1 ປີ ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 1% ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ ເຊິ່ງສອດຄ່ອງກັບການສຶກສາຂອງ Kingjan et al. (2023) ທີ່ພົບວ່າອາຍຸຂອງນັກຮຽນແມ່ນບໍ່ມີຜົນຕໍ່ການເລືອກເຂົ້າຮຽນ.

ຖ້າຫາກສະມາຊິກພາຍໃນຄອບຄົວຂອງນັກຮຽນມັດທະຍົມຕອນປາຍ ມ 7 ເພີ່ມຂຶ້ນ 1 ຄົນ ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດໜ້ອຍກວ່າ 1% ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ ເນື່ອງຈາກວ່າການເຂົ້າສຶກສາໃນຫຼັກສູດນາໆຊາດບໍລິຫານທຸລະກິດ ແມ່ນມີຄ່າໃຊ້ຈ່າຍຈຳນວນໜຶ່ງທີ່ກວມເອົາຄ່າທຽວໄປມາໂຮງຮຽນກັບສະຖານທີ່ພັກອາໄສ, ຄ່າໃຊ້ຈ່າຍດ້ານອາຫານ ແລະ ເຄື່ອງດື່ມ, ຄ່າລົງທະບຽນຮຽນ ແລະ ຄ່າສ້າງກິດຈະກຳຮ່ວມກັບໝູ່ເພື່ອນພາຍໃນຫ້ອງຮຽນ ເຊິ່ງກົງກັນຂ້າມກັບຜົນການສຶກສາຂອງ Vongkhaseum et al. (2026) ທີ່ບອກວ່າຈຳນວນສະມາຊິກໃນຄອບຄົວແມ່ນມີຜົນຕໍ່ການເລືອກເຂົ້າຮຽນດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1%.

ຖ້າຫາກພໍ່ຂອງນັກຮຽນມັດທະຍົມຕອນປາຍ ມ 7 ມີອາຊີບພໍ່ຄ້າຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນເພີ່ມຂຶ້ນ 4% ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1% ເຊິ່ງສອດຄ່ອງກັບການສຶກສາຂອງ Bamrungsetthapong (2018) ທີ່ບອກວ່າອາຊີບຂອງຜູ້ປົກຄອງແມ່ນມີຜົນຕໍ່ການເລືອກເຂົ້າຮຽນ ແຕ່ບໍ່ມີລະດັບຄວາມສຳຄັນທາງສະຖິຕິ ເນື່ອງຈາກວ່າອາຊີບຂອງພໍ່ແມ່ນມີຄວາມສຳຄັນເພາະວ່ານັກສຶກສາຈະເຂົ້າເຖິງການສຶກສາໃນລະດັບມະຫາວິທະຍາໄລແມ່ນມີຄ່າໃຊ້ຈ່າຍຈຳນວນຫຼາຍ ດັ່ງນັ້ນການທີ່ນັກສຶກສາມີອາຊີບເປັນພໍ່ຄ້າເຊິ່ງເປັນອາຊີບທີ່ລາຍໄດ້ທີ່ສົ່ງເສີມໃຫ້ລູກໄດ້ເຂົ້າຮັບການສຶກສາໃນລະດັບຂັ້ນສູງໃຫ້ມີຄວາມຮູ້ຄວາມສາມາດ ແລະ ມີການແຂ່ງຂັນໃນລະດັບສູງໃນປະຈຸບັນ ເຊິ່ງກົງກັນຂ້າມກັບຜົນການສຶກສາຂອງ Vongkhaseum et al. (2026) ທີ່ບອກວ່າອາຊີບແມ່ນບໍ່ມີຜົນຕໍ່ການເລືອກເຂົ້າຮຽນແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ.

ຖ້າຫາກແມ່ຂອງນັກຮຽນມັດທະຍົມຕອນປາຍ ມ 7 ມີອາຊີບແມ່ຄ້າຈະເຮັດໃຫ້ນັກຮຽນມີຄວາມຕ້ອງການເລືອກເຂົ້າຮຽນເພີ່ມຂຶ້ນ 12% ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1% ເຊິ່ງສອດຄ່ອງກັບການສຶກສາຂອງ Bamrungsetthapong (2018) ແລະ Vongkhaseum et al. (2026) ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ ເນື່ອງຈາກວ່າແມ່ກະແມ່ນຜູ້ໜຶ່ງທີ່ມີຄວາມສຳຄັນໃນການຜັກດັນສົ່ງເສີມໃຫ້ລູກທຸກຄົນໃຫ້ໄດ້ຮັບການສຶກສາໃນລະດັບສູງ ພ້ອມທັງມີຄວາມພູມໃຈທີ່ລູກເລືອກເຂົ້າຮັບການສຶກສາໃນລະດັບມະຫາວິທະຍາໄລ.

ຖ້າຫາກຄ່າສະເລ່ຍຂອງຄວາມຄາດຫວັງຫຼັງຈາກຮຽນຈົບເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ນັກຮຽນມີຄວາມຕ້ອງການເລືອກເຂົ້າຮຽນໜ້ອຍລົງ 7% ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1% ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Ayub (2015); Namoontree (2018); Hieu et al. (2020); Huong (2021); Khowchernklang et al. (2021); Hai et al. (2023); Phoumiphonh et al. (2024) ທີ່ບອກວ່າຄວາມຄາດຫວັງຫຼັງຈາກຮຽນຈົບແມ່ນຈະເຮັດໃຫ້ນັກຮຽນມີໂອກາດເລືອກເຂົ້າຮຽນເພີ່ມຂຶ້ນ ເນື່ອງຈາກວ່າພາຍຫຼັງຈາກຮຽນຈົບນັກສຶກສາຈະໄດ້ວຽກເຮັດງານທຳ

ແລະ ໄດ້ຮັບລາຍໄດ້ຈາກການເຮັດວຽກ ພ້ອມທັງມີລະດັບຄວາມສຳຄັນທາງດ້ານສະຖິຕິ 1%.

ຖ້າຫາກຄ່າສະເລ່ຍຂອງດ້ານຖານະທາງສັງຄົມເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດເພີ່ມຂຶ້ນ 7% ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1% ເຊິ່ງສອດຄ່ອງກັບການສຶກສາຂອງ Ayub (2015); Hai et al. (2023); Phoumiphonh et al. (2024); Pheangkhamsone et al. (2025) ພົບວ່າ ຖານະທາງສັງຄົມແມ່ນຈະເຮັດໃຫ້ນັກຮຽນມີໂອກາດເລືອກເຂົ້າຮຽນຂອງນັກຮຽນເພີ່ມສູງຂຶ້ນ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 1%

ຖ້າຫາກຄ່າສະເລ່ຍຂອງດ້ານພາບພົດຂອງສະຖາບັນເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ມີຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດໜ້ອຍລົງ 5% ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 5% ເຊິ່ງສອດຄ່ອງກັບການສຶກສາຂອງ Ayub (2015) ແລະ Phoumiphonh et al. (2024) ທີ່ພົບວ່າພາບພົດຂອງສະາບັນແມ່ນຈະເຮັດໃຫ້ນັກຮຽນມີໂອກາດເລືອກເຂົ້າຮຽນຂອງນັກຮຽນເພີ່ມສູງຂຶ້ນ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 1%

ຖ້າຫາກຄ່າສະເລ່ຍດ້ານຊື່ສຽງຂອງສະຖາບັນເພີ່ມຂຶ້ນ ນັກຮຽນມັດທະຍົມຕອນປາຍ ມ 7 ຈະເຮັດໃຫ້ເດັກມີຄວາມຕ້ອງການເລືອກເຂົ້າຮຽນເພີ່ມຂຶ້ນ 4% ແຕ່ບໍ່ມີລະດັບຄວາມສຳຄັນທາງດ້ານສະຖິຕິ ເຊິ່ງສອດຄ່ອງກັບການສຶກສາຂອງ Namoontree (2018) ແລະ Uthayapong et al. (2022). ສ່ວນວ່າຜົນການສຶກສາຂອງ Laomalol (2019); Hieu et al. (2020); Hai et al. (2023); Phoumiphonh et al. (2024); Pheangkhamsone et al. (2025); Vongkhaseum et al. (2026) ພົບວ່າ ຊື່ສຽງຂອງສະຖາບັນແມ່ນຈະເຮັດໃຫ້ນັກຮຽນມີໂອກາດເລືອກເຂົ້າຮຽນສູງຂຶ້ນ ດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 1%.

## 5. ສະຫຼຸບ

ຜົນການສຶກສາພົບວ່າ ລະດັບຄວາມຕ້ອງການໃນການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ເຫັນວ່າຢູ່ໃນລະດັບຫຼາຍ ເຊັ່ນວ່າໃນດ້ານຄວາມຄາດຫວັງດ້ານອາຊີບຫຼັງຈາກຮຽນຈົບ, ດ້ານຊື່ສຽງຂອງສະຖານບັນ, ດ້ານຖານະທາງສັງຄົມ ແລະ ດ້ານພາບພົດຂອງສະຖາບັນ ສ່ວນວ່າຜົນຈາກການຄາດປະມານແບບຈຳລອງ ຊຶ່ງຜົນຂອງການສຶກສາເຫັນວ່າມີ 5 ປັດໄຈຄື: ອາຊີບຂອງພໍ່, ອາຊີບຂອງແມ່, ຄວາມຄາດຫວັງດ້ານອາຊີບພາຍຫຼັງຈາກຮຽນຈົບຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ, ສະຖານະທາງສັງຄົມ ແລະ ດ້ານພາບພົດຂອງສະຖາບັນການສຶກສາແມ່ນມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ 0.01. ສ່ວນປັດໄຈອື່ນເຊັ່ນວ່າ: ດ້ານເພດ, ອາຍຸ, ສະມາຊິກໃນຄອບຄົວ ແລະ ດ້ານຊື່ສຽງຂອງສະຖາບັນ ບໍ່ຜ່ານການທົດສອບທາງສະຖິຕິ ເຊິ່ງບໍ່ມີຜົນຕໍ່ຄວາມຕ້ອງການເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງພວກຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບ.

## 7. ເອກະສານອ້າງອີງ

Ayub, H. (2015, December). Factors affecting student's attitude towards technical education and vocational training. In *ICBEM (International Conference on Business, Economics and Management) in Pattaya, Thailand, on* (pp. 15-16).

Bamrungsetthapong, S. (2018). Factors Affecting the Decision Making of Mathayom 3 Students in Higher Education (General or Vocational Program): A Case Study of Schools in Secondary Educational Service Area Office 2. *NKRAFA Journal of Humanities and Social Sciences*, (6), 114-128.

Chanthamanyvong, K., Duangvilaykeo, T., & Saibounbhang, S. (2024). Factors Affecting Students' Decisions in Choosing to Study for a Master's Degree of Souphanouvong University. *Souphanouvong University Journal of Multidisciplinary Research and Development*, *10*(4), 65-73. https://doi.org/10.69692/SUJMRD100465

Cronbach, L. J. (1951). Coefficient alpha and the internal structure of tests. *psychometrika*, *16*(3), 297-334.

Hai, N. C., Thanh, N. H., Chau, T. M., Van Sang, T., & Dong, V. H. (2023). Factors affecting the decision to choose a university of high school students: A study in An Giang Province, Vietnam. *International Journal of Evaluation and Research in Education*, *12*(1), 535-545.

Hieu, V. M., Xuyen, N. T. M., & Hung, D. D. P. (2020). Factors influencing to the university choice of high-schools pupils-an empirical study of Lam Dong province, Vietnam. *Journal of Critical Reviews*, *7*(8), 1656-1665.

Huong, K. L. (2021). Factors Affecting High School Students' Decision on Choosing a University: A Survey is Conducted in the Southeast Region of Vietnam. *Глобус: психология и педагогика*, *3*(43), 8-13.

Khowchernklang, J., Madilokkovit, C., & Siribanpitak, P. (2021). Factors Influencing High School Students' Decision in Eastern Economic Corridor area (EEC) to Choose Vocational School over University: Binary Logistic Regression Analysis. *Asia Social Issues*, *14*(6), 250133-12.

Kingjan, J., Racharak, B., & Paichayongvijit, T. (2023). Factors Affecting Decision to Continue Studying at Bachelor's Degree of High School Students that are Under the Offic of the Non-formal and Informal Education. *Suthiparithat Journal*, *37*(2), 42-56.

Laomalol, V. (2019). *Factors influencing the decision of students to pursue undergraduate studies at Khon Kaen University in the academic year 2019 through the TCAS selection system*. Bureau of Academic Administration and Development.

Ministry of Education and Sport. (2025). Draft Development Plan for Education, Science, and Sports, 5 years. X (2026-2030)

Namoontree, J. (2018). *Factors Affecting on Choosing Further Learning Program of Upper Secondary Students*. School of Educational Studies, Sukhothai Thammathirat Open University. (Original language is in Thai)

Pheangkhamsone, P., Somsamone, V., & Sifongxay, S. (2025). Factors Influencing on Students' Decisions to Study at Luang Prabang Traditional Arts College. *Souphanouvong University Journal Multidisciplinary Research and Development*, *11*(3), 156–163. https://doi.org/10.69692/SUJMRD1103156

Phommalangsy, P., Phonesay, L., Saiyasone, P., Phimmasone, X., & Luangsena, P. (2024). Factors affecting the quality of mathematics teaching and learning of high school students in the 4th grade in Savannakhet province: https://doi.org/10.69692/SUJMRD100191. *Souphanouvong University Journal Multidisciplinary Research and Development*, *10*(1), 91–98. Retrieved from https://www.su-journal.com/index.php/su/article/view/472

Phoumiphonh, S., Siphanthong, B., Seingdara, Ch., & Sioudomphan, S. (2024). Factors Influencing the Choice Decisions of Students to study at the Oudomxay Integrated Vocational Educational and Training College. *Souphanouvong University Journal Multidisciplinary Research and Development*, *10*(2), 167–176.

Suikhamlar, K., Luangsena, P., Xaysana, L., Phommakhanh, K., Khammanivong, T., Xayyavong, P. (2022). *Self - Assessment Report (SAR)*. Savannakhet University. (Original language is in Lao)

Uthayapong, T., Sangchan, P., Daowadueng, P., Thongsukhowong A., & Sutthachai, S. (2022). Motivations to Choose the Bachelor of Accountancy (International)

Program Among the Senior High School Students Studying in International Programs. *Journal of Management Science Nakhon Pathom Rajabhat University*, *9*(1), 352-364.
Vongkhaseum, B., Tounmanysone, T., Xayyasone, L., Chanthavongsa, P., Lokaphone, N., Sisouphanthong, B., Laddaphone, K., & Singpathoum, K. (2026). Factors Affecting the Choice of Admission to the Faculty of Business Administration, Savannakhet University. *Social Science Journal*, *26*(1), 70–83. https://doi.org/10.71026/ss.2026.01007
Yamane, T. (1973). *Statistics: An Introductory Analysis* (3ed.). New York: Harper and Row.

**ຕາຕະລາງທີ** 1: ປະຊາກອນ ແລະ ກຸ່ມຕົວຢ່າງ

| ຊື່ເມືອງ | ຈຳນວນນັກຮຽນ | ຈຳນວນຕົວຢ່າງ |
|---|---|---|
| ນະຄອນໄກສອນພົມວິຫານ | 788 | 699 |
| ອຸທຸມພອນ | 115 | 102 |
| ອາດສະພັງທອງ | 109 | 97 |
| ສອງຄອນ | 257 | 228 |
| ລວມ | **1,269** | **1,126** |

ແຫຼ່ງຂໍ້ມູນ: ພະແນກສຶກສາທິການ ແລະ ກິລາ, 2025 ແລະ ການຄຳນວນຂອງທີມງານວິໄຈ

**ຕາຕະລາງທີ** 2: ບັນດາຕົວປ່ຽນ, ນິຍາມຕົວປ່ຽນ, ໜ່ວຍວັດ, ຄວາມສຳພັນ ແລະ ແຫຼ່ງທີ່ມາ

| ຕົວປ່ຽນ | ນິຍາມຕົວປ່ຽນ | ຫົວໜ່ວຍ | ການພົວພັນ | ແຫຼ່ງຕົວປ່ຽນ |
|---|---|---|---|---|
| ຕົວປ່ຽນຕາມ (Dependent Variable) (Y) | | | | |
| Want | ເລືອກເຂົ້າຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ | 1 = ຕ້ອງການ<br>0 = ບໍ່ຕ້ອງການ | | |
| ຕົວປ່ຽນອິດສະຫຼະ (Independent Variable) | | | | |
| Gen | ເພດ | 1 = ຍິງ<br>0 = ຊາຍ | + | Khowchernklang, et al., (2021) |
| Age | ອາຍຸ | ປີ | + | Kingjan et al., (2023) |
| Member | ສະມາຊິກໃນຄົວເຮືອນ | ຄົນ | + | ຜູ້ສຶກສາ |
| Fa | ອາຊີບຂອງພໍ່ | 1 = ຄ້າຂາຍ<br>0 = ອື່ນໆ | + | Bamrungsetthapong, (2018) |
| Mo | ອາຊີບຂອງແມ່ | 1 = ຄ້າຂາຍ<br>0 = ອື່ນໆ | + | Bamrungsetthapong, (2018) |
| CG | ດ້ານອາຊີບຫຼັງຮຽນຈົບ | ຄ່າສະເລ່ຍ | + | Hai et al., (2023) |
| SS | ດ້ານຖານະທາງສັງຄົມ | ຄ່າສະເລ່ຍ | + | Hai et al., (2023) |
| II | ດ້ານພາບພົດຂອງສະຖາບັນ | ຄ່າສະເລ່ຍ | + | Ayub, (2015) |
| IR | ດ້ານຊື່ສຽງຂອງສະຖາບັນ | ຄ່າສະເລ່ຍ | + | Hieu et al., (2020) |

*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 234-243*
*https://doi.org/10.69692/SUJMRD1202234*

ແຫຼ່ງຂໍ້ມູນ: ລວບລວມໂດຍທີມງານວິໄຈ

**ຕາຕະລາງທີ 3**: ຜົນການວິເຄາະລະດັບຄວາມຕ້ອງການໃນການເລືອກຮຽນຫຼັກສູດນາໆຊາດສາຂາບໍລິຫານທຸລະກິດ ຄະນະບໍລິຫານທຸລະກິດ

| ລ/ດ | ລາຍການ | $\bar{X}$ | SD | ລະດັບຄວາມສຳຄັນ |
|---|---|---|---|---|
| 1 | ດ້ານຄວາມຄາດຫວັງດ້ານອາຊີບຫຼັງຈາກຮຽນຈົບ | 3.81 | 0.57 | ຫຼາຍ |
| 2 | ດ້ານຖານະທາງສັງຄົມ | 3.76 | 0.54 | ຫຼາຍ |
| 3 | ດ້ານພາບພົດຂອງສະຖາບັນ | 3.72 | 0.60 | ຫຼາຍ |
| 4 | ດ້ານຊື່ສຽງຂອງສະຖາບັນ | 3.77 | 0.64 | ຫຼາຍ |
| | ລວມ | 3.76 | 0.59 | ຫຼາຍ |

(ແຫຼ່ງທີ່ມາ: ໄດ້ຈາກການວິເຄາະແບບສອບຖາມໃນຄັ້ງວັນທີ 29 ພຶດສະພາ – 10 ມິຖຸນາ 2025)

**ຕາຕະລາງທີ 4**: ຜົນການວິເຄາະປັດໄຈທີ່ມີຜົນຕໍ່ການເລືອກເປັນຜູ້ປະກອບການຂອງນັກສຶກສາພາຍໃນ ຄະນະບໍລິຫານທຸລະກິດ

| | Loglikelihood | | | Marginal Effect | | |
|---|---|---|---|---|---|---|
| | Coefficient | z | P > z | dy/dx | z | P > z |
| _cons | 1.26 | -1.45 | 0.05 | | | |
| ເພດ (Gen) | -0.20 | 0.14 | 0.15 | -0.04 ns | -1.47 | 0.14 |
| ອາຍຸ (Age) | 0.03 | -0.36 | 0.89 | 0.01 | 0.14 | 0.89 |
| ສະມາຊິກໃນຄົວເຮືອນ (Member) | -0.06 | -1.07 | 0.29 | -0.01 ns | -1.07 | 0.29 |
| ອາຊີບພໍ່ (Fa) | 0.43 | 2.42 | 0.02 | 0.08*** | 2.54 | 0.01 |
| ອາຊີບແມ່ (Mo) | 0.58 | 3.66 | 0.00 | 0.12*** | 3.80 | 0.00 |
| ດ້ານອາຊີບຫຼັງຮຽນຈົບ (CG) | -0.36 | -2.48 | 0.01 | -0.07*** | -2.49 | 0.01 |
| ດ້ານຖານະທາງສັງຄົມ (SS) | 0.32 | 1.98 | 0.05 | 0.07** | 1.99 | 0.05 |
| ດ້ານພາບພົດຂອງສະຖາບັນ (II) | -0.24 | -1.72 | 0.09 | -0.05** | -1.72 | 0.09 |
| ດ້ານຊື່ສຽງຂອງສະຖາບັນ (IR) | 0.19 | 1.43 | 0.15 | 0.04 ns | 1.43 | 0.15 |
| Prob > chi2 | 0.0000 | | | | | |
| Pseudo R2 | 0.0341 | | | | | |

ໝາຍເຫດ: ** ມີຄວາມສຳຄັນທາງສະຖິຕິ 0.05 ຫຼື ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 95%,
*** ມີຄວາມສຳພັນທາງສະຖິຕິ 0.01 ຫຼື ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99%
ແລະ ns ບໍ່ມີຄວາມສຳຄັນທາງສະຖິຕິໃນລະດັບສູງກວ່າ 0.1 ຫຼື ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 90%

ແຫຼ່ງຂໍ້ມູນ: ຈາກການສຳຫຼວດດ້ວຍແບບສອບຖາມ ແລະ ວິເຄາະໂດຍທີມງານວິໄຈ